ສົ່ງ: ທ່ານ ຫົວໜ້າສານັກງານ ຄຄຊ "ເພື່ອຊາບ".

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ...040.........
ວັນທີ...14/1/2015
ໂທລະສັບ 021 2177

ເລກທີ: 02 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 13 JAN 2015

**ລາຍງານການເຄື່ອນໄຫວປະຈໍາອາທິດ**
**29/12/2014 ຫາ 02/01/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**
**ຂອງທະນາຄານແຫ່ງ ສປປ ລາວ**

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນຕົວເລກການຂະຫຍາຍຕົວທາງເສດຖະກິດຂອງສະຫະລັດຂະຫຍາຍຕົວເພີ່ມຂຶ້ນຈາກ 4,6% ໄຕມາດ 2/2014 ເປັນ 5%. ໃນຂະນະທີ່, ດັດຊະນີຄວາມເຊື່ອໝັ້ນຜູ້ບໍລິໂພກຂອງເອີຣົບ ໃນເດືອນ 12/2014 ສືບຕໍ່ຫຼຸດລົງ ຈາກ -11,5 ເປັນ -10,9 ໃນເດືອນຜ່ານມາ ແລະ ຕົວເລກດັດຊະນີການສ້າງບ້ານໃໝ່ຂອງຍີ່ປຸ່ນ ຫຼຸດລົງ 14,3% ໃນເດືອນ 11/2014 ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 17-23/12/2014 | ອາທິດນີ້ 24-30/12/2014 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1.2230 | 1.2148 | 0.67% |
| ໂດລາ/ເຢນ | 120.11 | 120.14 | -0.02% |
| ໂດລາ/ບາດ | 32.90 | 32.93 | -0.11% |
| ໂດລາ/ເປໂຊ | 44.63 | 44.69 | -0.14% |
| ໂດລາ/ຣູເປັຍ | 1.2455.56 | 1.2448.56 | 0.06% |
| ໂດລາ/ໂດລາສິງກະໂປ | 1.3212 | 1.3238 | -0.19% |
| ໂດລາ/ຢວນ | 6.2241 | 6.2165 | 0.12% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 4,42% ຈາກ 55,78 ໂດລາ/ບາເຣວ ມາເປັນ 53,32 ໂດລາ/ບາເຣວ ຍ້ອນນັກລົງທຶນຄາດວ່າຄວາມຕ້ອງການນ້ຳມັນຂອງໂລກຫຼຸດລົງ ເຫັນໄດ້ຈາກຄັງສຳຮອງນ້ຳມັນທາງການຄ້າຂອງສະຫະລັດປະຈຳອາທິດທີ 19/12/2014 ເພີ່ມຂຶ້ນ 7,3 ລ້ານບາເຣວ;

ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 0,70% ຈາກ 1.179,18 ໂດລາ/ອອນ ມາເປັນ 1.187,47 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ ແລະ ປ້ອງກັນຄວາມສ່ຽງຈາກຄວາມບໍ່ແນ່ນອນຂອງເສດຖະກິດໂລກ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,07% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,08% ສຳລັບອັດຕາຕະຫຼາດ. ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,47% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 1,58% ສຳລັບອັດຕາຕະຫຼາດ ແຕ່ຖ້າທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,98% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 1,20% ສຳລັບອັດຕາຕະຫຼາດ. ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 1,03% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,98% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 17-23/12/2014 | | | ອາທິດນີ້ 24-30/12/2014 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8,072.92 | 8,100.62 | 8,084.53 | 8,074.35 | 8,106.00 | 8,090.42 | -0.02% | -0.07% | -0.07% |
| ບາດ | 247.60 | 248.68 | 248.11 | 246.54 | 247.66 | 246.96 | 0.43% | 0.41% | 0.47% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8,097.50 | 8,154.33 | 8,125.92 | 8,101.10 | 8,138.33 | 8,119.72 | -0.04% | 0.20% | 0.08% |
| ບາດ | 251.35 | 253.20 | 252.28 | 247.39 | 249.29 | 248.34 | 1.60% | 1.57% | 1.58% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0.30% | 0.66% | 0.51% | 0.33% | 0.40% | 0.36% | | | |
| ບາດ | 1.51% | 1.82% | 1.68% | 0.34% | 0.66% | 0.56% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 0,75% ທຽບໃສ່ວັນທີ 26/12/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 57,23%.
- ປະລິມານເງິນ $M_2$ ເພີ່ມຂຶ້ນ 0,12% ເມື່ອທຽບໃສ່ວັນທີ 26/12/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 25,93%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 23-29/12/2014) ເຫັນວ່າ ທທກ ຊື້ໂດລາສຸດທິ 22,42 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 67,93 ລ້ານໂດລາ ແລະ ຂາຍໂດລາໄດ້ 45,52 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 338,59 ລ້ານບາດ (ໃນນີ້ ຊື້ບາດໄດ້ 514,80 ລ້ານບາດ ແລະ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ຂາຍບາດໄດ້ 853,38 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 13,74% ແລະ ເພີ່ມຂຶ້ນ 11,20% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 21,52 ລ້ານໂດລາ ແລະ ເງິນບາດມີ ຈໍານວນ 152,94 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈໍານວນ 15,20 ລ້ານໂດລາ ແລະ ຊື້ບາດສຸດທິ ຈໍານວນ 100 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈໍານວນ 7,69 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈໍານວນ 254,19 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດຜ່ານມາ 16-22/12/2014 | | ອາທິດນີ້ 23-29/12/2014 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 23.25 | 202.80 | 23.52 | 342.78 | 1.16% | 69.02% |
| - ທ/ຄທຸລະກິດອື່ນໆ | 20.45 | 185.90 | 44.42 | 172.02 | 117.24% | -7.47% |
| ລວມຊື້: | 43.69 | 388.70 | 67.93 | 514.80 | 55.48% | 32.44% |
| 2. ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 24.60 | 246.82 | 22.96 | 232.15 | -6.67% | -5.94% |
| - ທ/ຄທຸລະກິດອື່ນໆ | 31.45 | 594.88 | 22.56 | 621.23 | -28.27% | 4.43% |
| ລວມຂາຍ: | 56.05 | 841.69 | 45.52 | 853.38 | -18.79% | 1.39% |
| ຊື້-ຂາຍສຸດທິ ທທກ | -12.36 | -453.00 | 22.42 | -338.59 | -281.42% | -25.26% |
| ຜິດດ່ຽງ ຊື້-ຂາຍ | -28.28 | -116.54 | 33.00 | -65.77 | 612.86% | 507.06% |
| ມູນຄ່າການຊື້-ຂາຍ | 99.74 | 1,230.39 | 113.45 | 1,368.18 | 13.74% | 11.20% |
| 3. ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 28.00 | 0.00 | 18.60 | 100.00 | | |
| - ທຫລ ຂາຍໃຫ້ ທທກ | 11.92 | 108.00 | 3.40 | 0.00 | | |
| ຊື້-ຂາຍສຸດທິ ທຫລ | 16.08 | -108.00 | 15.20 | 100.00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 6.37 | 106.29 | 21.52 | 152.94 | | |
| 5. ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 7.61 | 290.11 | 0.52 | 254.44 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 8.80 | 0.00 | 8.21 | 0.26 | | |
| ຊື້-ຂາຍສຸດທິ ທຫລ | -1.20 | 290.11 | -7.69 | 254.19 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈໍາເດືອນ 12/2014 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 2,40% ຫຼຸດລົງ 0,41% ຈາກ 2,81% ໃນເດືອນ 11/2014.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 59,4 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 43% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 893 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 11,63% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 679,25 ຕື້ກີບ ເພີ່ມຂຶ້ນ 31% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (26/12/2014-01/01/2015) ມີຈຳນວນ 667 ຄັ້ງ ໂດຍມີມູນຄ່າ 390,68 ຕື້ກີບ ຫຼຸດລົງ 9,57 ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 251 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.414,19 ຈຸດ ຫຼຸດລົງ 0,17% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 3,42 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 17,45 ຕື້ກີບ ເພີ່ມຂຶ້ນ 3,95% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍ ກວມເອົາ 63,51% ຂອງມູນຄ່າການຊື້-ຂາຍທັງໝົດ. ໃນອາທິດນີ້ຕະຫຼາດຫຼັກຊັບລາວ ໄດ້ປິດການບໍລິການແລກປ່ຽນຊື້-ຂາຍຮຸ້ນ ແຕ່ວັນທີ 29 ທັນວາ 2014 ເຖິງ ວັນທີ 2 ມັງກອນ 2015 ເນື່ອງຈາກເປັນວັນປິດທຸລະກິດ 3 ວັນທ້າຍປີຂອງຕະຫຼາດຫຼັກຊັບລາວ, ວັນສະເຫຼີມສະຫຼອງປີໃໝ່ສາກົນ ແລະ ມື້ປິດການໃຫ້ບໍລິການຂອງທະນາຄານຕົວແທນ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.500 ກີບ/ຮຸ້ນ ເພີ່ມຂຶ້ນ 578 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 410 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,07 ລ້ານກີບ ຫຼຸດລົງ 99,20% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,51%[2].

ຮຸ້ນຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.045 ກີບ/ຮຸ້ນ ຫຼຸດລົງ 9 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1,13 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 7,96 ຕື້ກີບ ເພີ່ມຂຶ້ນ 155,38% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 99,86% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,26%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.900 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ ແລະ ໃນອາທິດນີ້ ແມ່ນບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,71%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 4.128 ກີບ/ຮຸ້ນ ເພີ່ມຂຶ້ນ 231 ກີບ/ຮຸ້ນ, ມີປະລິມານຊື້-ຂາຍທັງໝົດ 2,29 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 9,48 ຕື້ກີບ ຫຼຸດລົງ 28,61% ເມື່ອທຽບໃສ່ອາທິດທີ່ຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 33,02% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 16,07%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສຳເລັດການຈັດກອງປະຊຸມປຶກສາຫາລືກ່ຽວກັບ ປື້ມຄູ່ມືສັງລວມວຽກງານການເຊື່ອມໂຍງຂະແໜງການເງິນ-ເງິນຕາອາຊຽນ ແລະ ການເສີມສ້າງຄວາມສາມາດ ທີ່ທະນາຄານແຫ່ງ ສປປ ລາວ;
- ສຳເລັດການປິດລະບົບບັນຊີເຕັກນິກປະຈຳປີ 2014 ຂອງ ທຫລ ທົ່ວລະບົບ ໃນລະບົບທົດລອງ ແລະ ລະບົບນຳໃຊ້ຈິງ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ສໍາເລັດການຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດ ຂອງບັນດາທະນາຄານທຸລະກິດ;
- ສໍາເລັດການເຂົ້າຮ່ວມສໍາມະນາ ໃນຫົວຂໍ້: "ການນໍາໃຊ້ເສດຖະມິຕິ" ເພື່ອການສ້າງແບບຈໍາລອງເສດຖະກິດມະຫາພາກ ຄັ້ງທີ II ທີ່ທະນາຄານແຫ່ງ ສປປ ລາວ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ລຸ້ນປີ 2011 ຈໍານວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າການສະເໜີຂອງໂຄງການ AFP ຕໍ່ການສະເໜີພິຈາລະນາເອົາຕົວແທນຈາກທະນາຄານທຸລະກິດລັດເຂົ້າຮ່ວມໃນສະພາບໍລິຫານ NSOs, ❷ ຄົ້ນຄວ້າກ່ຽວກັບການສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝ ໂດຍສະເພາະແມ່ນລະບົບ IT, ❸ ຄົ້ນຄວ້າເນື້ອໃນຂອງຫຼັກການບາແຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການບາແຊວ 2, ❹ ຄົ້ນຄວ້າເນື້ອໃນຂອງຫຼັກການບາແຊວ 2 ໃນແຕ່ລະ Pillar ໂດຍລົງເລິກບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການບາແຊວ 2 ເພື່ອເປັນໝາກຜົນໃນການລາຍງານກອງປະຊຸມຄົບຄະນະບາແຊວ 2 ຄັ້ງທີ V, ❺ ຄົ້ນຄວ້າຄູ່ມືກ່ຽວກັບຄວາມໂປ່ງໃສ ແລະ ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ (Guidance On Transparency and Beneficial Ownership).

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ພາສີ ພິມມະກອນ